**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງການເງິນ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 972 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 09 AUG 2018

# ແຈ້ງການ

**ເຖິງ:** ບັນດາທ່ານທີ່ມີຄວາມສົນໃຈສອບເສັງເຂົ້າເປັນລັດຖະກອນໃໝ່ກະຊວງການເງິນ ປີ 2018.

**ເລື່ອງ:** ການສອບເສັງຄັດເລືອກເອົາລັດຖະກອນໃໝ່ຂອງກະຊວງການເງິນ ຄັ້ງທີ II ປີ 2018.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນສະບັບ ເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີວ່າດ້ວຍການແບ່ງຕົວເລກລັດຖະກອນໃໝ່ ປີ 2018 ສະບັບເລກທີ 81 /ນຍ,ລົງວັນທີ 30 ພະຈິກ 2017
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການອະນຸມັດຕົວເລກ(ໂກຕ້າ)ລັດຖະກອນໃໝ່ ຂອງ ກະຊວງການເງິນ ປີ 2018 ສະບັບເລກທີ 0994/ກງ, ລົງວັນທີ 29 ມີນາ 2018.
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງກອງປະຊຸມຄະນະຮັບຜິດຊອບສອບເສັງລັດຖະກອນໃໝ່ ຂອງ ກະຊວງການເງິນ ປີ 2018 ຄັ້ງວັນທີ 23 ກໍລະກົດ 2018.

ກະຊວງການເງິນຈະໄດ້ເປີດການສອບເສັງຄັດເລືອກເອົາລັດຖະກອນໃໝ່ ຄັ້ງທີ II ປີ 2018 ເພື່ອປະກອບໃສ່ຕຳແໜ່ງງານທີ່ຍັງຫວ່າງ. ການສອບເສັງ ຄັ້ງທີ II ຈະໄດ້ຈັດຂຶ້ນ ໃນວັນທີ 18 ສິງຫາ 2018 ທີ່ສະຖາບັນເສດຖະກິດ-ການເງິນ(ດົງຄຳຊ້າງ). ມາດຖານເງື່ອນໄຂຜູ້ສະໝັກເຂົ້າຮ່ວມສອບເສັງຄັ້ງທີ II ລາຍລະອຽດມີດັ່ງນີ້:

1. <u>ວິຊາໄອທີ</u>: ຜູ້ທີ່ມີອາຍຸ 18 ຫາ 35 ປີ, ຕ້ອງມີໃບປະກາສະນີຍະບັດຈົບປະລິນຍາຕີຂຶ້ນໄປ ໃນສາຂາວິຊາ ວິທະຍາສາດຄອມພິວເຕີ, ວິສາວະກຳຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ມີຄະແນນ GPA 3.00 ຂຶ້ນໄປ ຫຼື 7 ຂຶ້ນໄປ ແລະ ຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ. ຖ້າມີໃບຢັ້ງຢືນຈົບພາສາອັງກິດ IELTS ຫຼື TOEFL ໃນຄະແນນທີ່ດີ ຈະພິຈາລະນາເປັນພິເສດ. ສຳລັບຜູ້ທີ່ສອບເສັງຄັດເລືອກບໍ່ຜ່ານໃນຄັ້ງທີ I ຜ່ານມາ ຖ້າມີເງື່ອນໄຂຄົບຖ້ວນດັ່ງທີ່ກ່າວມາຂ້າງເທິງ ກໍ່ສາມາດປະກອບເອກະສານເຂົ້າຮ່ວມສອບເສັງໄດ້.
2. <u>ວິຊາພາສາອັງກິດ:</u> ຜູ້ທີ່ມີອາຍຸ 18 ຫາ 35 ປີ, ຕ້ອງແມ່ນຜູ້ທີ່ມີທັງໃບປະກາສະນີຍະບັດຈົບປະລິນຍາຕີຂຶ້ນໄປ ສາຂາວິຊາທີ່ກ່ຽວຂ້ອງກັບຂະແໜງການເງິນເຊັ່ນ: ການເງິນ-ການບັນຊີ, ການເງິນ-ການທະນາຄານ, ເສດຖະສາດ, ບໍລິຫານທຸລະກິດ; ສຳລັບຜູ້ທີ່ຮຽນຈົບຢູ່ພາຍໃນ ຫຼື ຕ່າງປະເທດ(ທີ່ບໍ່ໄດ້ຮຽນເປັນພາສາອັງກິດ) ຕ້ອງມີໃບປະກາສະນີຍະບັດຈົບພາສາອັງກິດ ລະດັບຊັ້ນສູງຂຶ້ນໄປ ທີ່ມີຄະແນນ GPA 3.00 ຂຶ້ນໄປ ຫຼື 7.00 ຂຶ້ນໄປ ຈຶ່ງມີເງື່ອນໄຂເຂົ້າຮ່ວມສອບເສັງໄດ້; ສຳລັບຜູ້ທີ່ຮຽນຈົບສາຂາວິຊາກ່ຽວກັບຂະແໜງການເງິນ(ດັ່ງທີ່ກ່າວມາຂ້າງເທິງນັ້ນ)ຈາກຕ່າງປະເທດ(ທີ່ຮຽນເປັນພາສາອັງກິດ) ບໍ່ມີໃບປະກາດຮຽນຈົບພາສາອັງກິດ ກໍ່ສາມາດສະໝັກເຂົ້າສອບເສັງໄດ້. ຜູ້ທີ່ມີໃບຢັ້ງຢືນຈົບພາສາອັງກິດ IELTS ຫຼື TOEFL ດ້ວຍຄະແນນລະດັບດີ, ມີ

ຄວາມສາມາດດ້ານການເປັນນາຍແປພາສາ ຫຼື ສາມາດເຈລະຈາຕໍ່ລອງກັບຕ່າງປະເທດໄດ້ ຈະພິຈາລະນາເປັນພິເສດ. ສຳລັບຜູ້ທີ່ສອບເສັງຄັດເລືອກບໍ່ຜ່ານໃນຄັ້ງທີ I ຜ່ານມາ ຖ້າມີເງື່ອນໄຂຄົບຖ້ວນດັ່ງທີ່ກ່າວມາຂ້າງເທິງກໍ່ສາມາດປະກອບເອກະສານ ເຂົ້າຮ່ວມສອບເສັງໄດ້.

❖ ວິທີພົວພັນເອົາຄຳຮ້ອງສະໝັກມີ 02 ວິທີດັ່ງນີ້ :

1. ວິທີ 01: ຜູ້ທີ່ມີຄວາມສົນໃຈຢາກສອບເສັງ ສາມາດເຂົ້າໄປພົວພັນຮັບຄຳຮ້ອງສະໝັກເຂົ້າສອບເສັງໄດ້ທີ່ສະຖາບັນເສດຖະກິດ-ການເງິນ(ດົງຄຳຊ້າງ).
2. ວິທີ 02: ສາມາດດາວໂຫຼດຄຳຮ້ອງສະໝັກເຂົ້າສອບເສັງໄດ້ທາງເວບໄຊ໌ ກະຊວງການເງິນ www.mof.gov.la

❖ ເອກະສານສະໝັກເຂົ້າສອບເສັງມີດັ່ງນີ້ :

- ຄຳຮ້ອງສະໝັກເຂົ້າສອບເສັງ(ຈາກກະຊວງການເງິນ) 01 ຊຸດ;
- ສຳເນົາໃບປະກາສະນິຍະບັດ ແລະ ໃບຄະແນນ 01 ຊຸດ;
- ຊີວະປະຫວັດທົ່ວໄປ 01 ຊຸດ;
- ສຳເນົາປຶ້ມສຳມະໂນຄົວຫຼືບັດປະຈຳຕົວ 01 ຊຸດ;
- ຮູບຂະໜາດ 3 x 4 ຖ່າຍບໍ່ເກີນສາມເດືອນ 03ໃບ;

- ພາຍຫຼັງປະກອບເອກະສານແລ້ວ ໃຫ້ຍື່ນເອກະສານສະໝັກດ້ວຍຕົນເອງຢູ່ສະຖາບັນເສດຖະກິດ-ການເງິນ(ດົງຄຳຊ້າງ) ບໍ່ອະນຸຍາດໃຫ້ບຸກຄົນອື່ນມາຮັບ-ສົ່ງເອກະສານແທນ.
- ເວລາມາຍື່ນເອກະສານຕ້ອງຖືໃບປະກາສະນິຍະບັດ ແລະ ໃບຄະແນນສະບັບແທ້ມາຢັ້ງຢືນ.
- ຄ່າທຳນຽມລົງທະບຽນເຂົ້າຮ່ວມການສອບເສັງຄົນລະ 20.000 ກີບ
- ເລີ່ມພົວພັນ ແລະ ຮັບເອກະສານສະໝັກ ນັບແຕ່ວັນທີ 13 ສິງຫາ 2018 ເປັນຕົ້ນໄປ ແລະ ປິດຮັບວັນທີ 15 ສິງຫາ 2018 (ເວລາ 16 ໂມງ 00 ນາທີ).
- ໃຫ້ຜູ້ສະໝັກສອບເສັງມາຕິດຕາມເບິ່ງລາຍຊື່ ແລະ ຫ້ອງສອບເສັງ ທີ່ສະຖາບັນເສດຖະກິດ-ການເງິນ(ດົງຄຳຊ້າງ)ຢ່າງໜ້ອຍ 01 ວັນກ່ອນມື້ສອບເສັງ.
- ມື້ສອບເສັງ: ວັນທີ 18 ສິງຫາ 2018 ທີ່ສະຖາບັນເສດຖະກິດ-ການເງິນ(ດົງຄຳຊ້າງ) ເລີ່ມແຕ່ເວລາ : 08 ໂມງ 00 ນາທີ ເປັນຕົ້ນໄປ.
- **ສອບຖາມຂໍ້ມູນເພີ່ມເຕີມ:** ກົມຈັດຕັ້ງ ແລະ ພະນັກງານ ກະຊວງການເງິນ ຖະໜົນ 23 ສິງຫາ, ບ້ານໜອງບອນ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ໂທ/ແຟັກ : 021 451 836.

**ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ**

ພູພັດ ໄຊທິ